ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ທະບຽນເຂົ້າ
ເລກທີ - 0571 ກວຕ
ລົງວັນທີ 20 MAR 2014
ເວລາ 11.06
ສົ່ງເຖິງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 94 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 17.3.2014

# ດຳລັດ
# ຂອງນາຍົກລັດຖະມົນຕີ
# ວ່າດ້ວຍການຮັບຮອງ, ຢັ້ງຢືນ ແລະ ການຍົກເວັ້ນ
# ສະເພາະບາງບັນຫາທີ່ຕິດພັນກັບໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳຊັນ 3 A

ໂດຍອີງຕາມ:

- ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012 (**ກົດໝາຍວ່າດ້ວຍການສ້າງນິຕິກຳ**);
- ກົດໝາຍວ່າດ້ວຍໄຟຟ້າ (ປັບປຸງ) ສະບັບເລກທີ 03/ສພຊ ລົງວັນທີ 20 ທັນວາ 2011 (**ກົດໝາຍວ່າດ້ວຍໄຟຟ້າ**);
- ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ ລົງວັນທີ 21 ຕຸລາ 2003 (**ກົດໝາຍວ່າດ້ວຍທີ່ດິນ**);
- ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເລກທີ 02-96/ສພຊ ລົງວັນທີ 11 ຕຸລາ 1996 (**ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**);
- ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 119/ນຍ, ລົງວັນທີ 20 ເມສາ 2011 (**ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**);
- ດຳລັດ ວ່າດ້ວຍການປ້ອງກັນປ່າປ້ອງກັນ ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010 (**ດຳລັດວ່າດ້ວຍປ່າປ້ອງກັນ**);
- ດຳລັດ ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫລື ສຳປະທານ ສະບັບເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009 (**ດຳລັດວ່າດ້ວຍການເຊົ່າ ຫລື ສຳປະທານ ທີ່ດິນຂອງລັດ**);
- ສັນຍາສຳປະທານໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳຊັນ 3 A (**ສັນຍາສຳປະທານ**) ລົງວັນທີ 22 ພະຈິກ 2013 ແລະ ເຊັນໂດຍ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (**ລັດຖະບານລາວ**) ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດ ໄຟຟ້ານ້ຳຊັນ 3 A ຈຳກັດ (**ບໍລິສັດ**) ກ່ຽວກັບໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳ 3 A (**ໂຄງການ**);
- ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການ ອະນຸມັດ ແລະ ການຍົກເວັ້ນ ຕໍ່ກັບ **ສັນຍາສຳປະທານ** ໃຫ້ **ບໍລິສັດ** ໂດຍ **ລັດຖະບານລາວ** ເລກທີ 0143/ຄປຈ, ລົງ

ວັນທີ 27/12/2013; ( ຄຳສັບພິມຕົວເຂັ້ມທີ່ບໍ່ໄດ້ນິຍາມໄວ້ໃນ ດຳລັດສະບັບນີ້ ໃຫ້ມີຄວາມໝາຍຕາມທີ່ໃຫ້ໄວ້ໃນ **ສັນຍາສຳປະທານ** ).

- ອີງຕາມ ເອກະສານສະເໜີຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0334/ພບ, ລົງວັນທີ 27/02/2014;

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ດຳລັດສະບັບນີ້ອະນຸມັດ:

1.1 ອີງຕາມ ມາດຕາ 34(3) ຂອງ **ກົດໝາຍວ່າດ້ວຍໄຟຟ້າ** ຈຶ່ງຮັບຮອງໃຫ້ການພັດທະນາ, ກໍ່ສ້າງ ແລະ ເຄື່ອນໄຫວ ໂຄງການ ລວມເອົາກຳລັງຕິດຕັ້ງທັງໝົດ ຂອງ ໂຄງການ ປະມານ 69 MW;

1.2 ຂໍ້ຕົກລົງລາຄາໄຟຟ້າທີ່ໄດ້ລະບຸໄວ້ໃນ ສັນຍາຊື້-ຂາຍໄຟຟ້າ ວ່າແມ່ນສອດຄ່ອງ, ຖືກຕ້ອງຕາມ ມາດຕາ 47 ແລະ 48 ຂອງ **ກົດໝາຍວ່າດ້ວຍໄຟຟ້າ.**

1.3 ອີງຕາມ ມາດຕາ 66(2) ຂອງ **ກົດໝາຍວ່າດ້ວຍທີ່ດິນ**, ສິດຂອງ**ບໍລິສັດ** ໃນການນຳໃຊ້ຊັບສິນຄົງທີ່ ຊຶ່ງຕັ້ງເທິງທີ່ດິນທີ່ເຊົ່າ ເປັນຫລັກຊັບຄ້ຳປະກັນ;

1.4 ອີງຕາມ ມາດຕາ 18 ແລະ 19 ຂອງ **ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ**, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳຂະໜາດໃຫຍ່ ແລະ ກິດຈະກຳຂະໜາດໃຫຍ່ ສຳລັບຈຸດປະສົງຂອງ ໂຄງການ ແລະ ການຄຸ້ມຄອງໂຄງການ;

**ມາດຕາ 2** ດຳລັດສະບັບນີ້ໄດ້ຍົກເວັ້ນ:

2.1 **ບໍລິສັດ**ຈາກ ມາດຕາ 4 ຂອງ **ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນ ຕ້ອງຖອກທຶນຢ່າງນ້ອຍຊາວສ່ວນຮ້ອຍ (20%) ຂອງທຶນຈົດທະບຽນເບື້ອງຕົ້ນ ຂອງ **ບໍລິສັດ**ພາຍໃນ 90 ວັນລັດຖະການ ນັບແຕ່ວັນທີ່ສ້າງຕັ້ງ**ບໍລິສັດ** ແລະ ຖອກທຶນຈົດທະບຽນທີ່ເຫລືອ ພາຍໃນ 2 ປີ ນັບແຕ່ວັນທີ່ສ້າງຕັ້ງ**ບໍລິສັດ** ແລະ ຕ້ອງຖອກ ເປັນເງິນກີບ;

2.2 **ບໍລິສັດ**ຈາກ ຂໍ້ກຳນົດໃນມາດຕາ 18 ຂອງ **ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນ ຕ້ອງກຳນົດໃຫ້ບໍລິສັດຖອກທຶນຈົດທະບຽນທັງໝົດ ກ່ອນທີ່ຈະມີການໂອນຮຸ້ນໃຫ້: (i) ບໍລິສັດໃນເຄືອຂ່າຍ, (ii) ເມື່ອມີການບັງຄັບປະຕິບັດໂດຍຜູ້ໃຫ້ກູ້ຢືມ ຫລື (iii) ລະຫວ່າງຜູ້ຖືຮຸ້ນດ້ວຍກັນ;

2.3 **ບໍລິສັດ**ມາຈາກມາດຕາ 15 (1) ຂອງ**ດຳລັດວ່າດ້ວຍກົດໝາຍສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນຕ້ອງຈ່າຍເງິນຄ້ຳປະກັນໃນຈຳນວນ 30.000 ໂດລາສະຫະລັດ ສຳລັບການກໍ່ສ້າງໂຄງການໄຟຟ້າພະລັງງານນ້ຳ ທີ່ມີຂະໜາດກຳລັງຕິດຕັ້ງສູງກວ່າ 5 MW ຫາ 100 MW;

2.4 ເວັ້ນເສຍແຕ່ໄດ້ກຳນົດໄວ້ຢ່າງອື່ນໃນສັນຍາເຊົ່າທີ່ດິນໃດໆ ທີ່ໄດ້ເຂົ້າຮ່ວມລະຫວ່າງ**ບໍລິສັດ** ແລະ **ລັດຖະບານລາວ** ເຊິ່ງຕາງໜ້າໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບການຈ່າຍຄ່າເຊົ່າ ຂອງພື້ນທີ່ສະເພາະທີ່ກຳນົດພາຍໃນສະຖານທີ່, **ບໍລິສັດ**ໄດ້ຮັບການຍົກເວັ້ນຈາກຂໍ້ກຳນົດ ພາຍໃຕ້ ມາດຕາ 4 ຂອງ **ດຳລັດວ່າດ້ວຍການເອົາທີ່ດິນລັດໃຫ້ເຊົ່າ ຫລື ສຳປະທານ** ສຳລັບການຈ່າຍຄ່າທຳນຽມທີ່ດິນ ຂອງພື້ນທີ່ອື່ນພາຍໃນສະຖານທີ່;

2.5 **ບໍລິສັດ** ຈາກມາດຕາ 43 ຂອງ **ດຳລັດດ້ວຍການເອົາທີ່ດິນລັດໃຫ້ເຊົ່າ ຫລື ສຳປະທານ**, ກ່ຽວກັບການຄິດໄລ່ຄ່າຊົດເຊີຍສຳລັບບຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍຂຶ້ນຢູ່ກັບການປະຕິບັດສອດຄ່ອງຂອງບໍລິສັດໂຄງການ ຕາມຂໍ້ກຳນົດ